ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ
# ຄະນະກຳມະການປະສານງານກອງທຶນໂລກ

ກອງປະຊຸມຄັ້ງນີ້ໄດ້ຈັດຂຶ້ນຄັ້ງທີ 02 ຂອງສົກປີ 2021 ວັນອັງຄານ ທີ 06 ເມສາ 2021 ເວລາ 13:30 ຫາ 16:30 ທີ່ຫ້ອງປະຊຸມຊັ້ນ 1 ກະຊວງສາທາລະນະສຸກ ໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ , ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

ກອງປະຊຸມຄັ້ງນີ້ໄດ້ປະກອບມີຫຼາຍພາກສ່ວນເຂົ້າຮ່ວມເຊັ່ນ : ສະມາຊິກ ແລະ ຕົວແທນຂອງຄະນະກຳມະການປະສານງານກອງທຶນໂລກ (CCM) ຈຳນວນ 21 ທ່ານ (ມີສິດອອກສຽງໄດ້ 20 ທ່ານ) ແລະ ພາກສ່ວນອື່ນໆຈຳນວນ 21 ທ່ານ ເຊິ່ງຕາງໜ້າຈາກຄະນະກຳມະການກວດກາຂອງ CCM, ຄະນະກຳມະການຂົນຂວາຍແຫຼ່ງທຶນຂອງ CCM, ກົມແຜນການ ແລະ ຮ່ວມມືກະຊວງສາທາລະນະສຸກ, ຜູ້ຕາງໜ້າຈາກ ໂຄງການ 3ພະຍາດ, ໜ່ວຍງານບໍລິຫານຄຸ້ມຄອງໂຄງການກອງທຶນໂລກ, ບັນດາຄູ່ຮ່ວມງານ ແລະ ກອງເລຂາ CCM, ລວມທັງໝົດ 42 ທ່ານ.

## 1. ວາລະກອງປະຊຸມ

1. ລາຍງານຜົນການປະເມີນຂອງຂະບວນການວິວັດ CCM, ຂົງເຂດ ແລະ ກິດຈະກຳທີ່ເປັນບຸລິມະສິດເພື່ອປັບປຸງວຽກງານຫຼັກຂອງ CCM;
2. ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ, ວັນນະໂລກ ແລະ ໄຂ້ຍຸງ);
3. ບັນຫາອື່ນໆ: ແຈ້ງຂ່າວກ່ຽວກັບທຶນຊ່ວຍເຫຼືອເພີ່ມຈາກກອງທຶນໂລກເພື່ອນຳໃຊ້ເຂົ້າໃນການຕອບໂຕ້ຕໍ່ COVID19 ພາຍໃນປະເທດ;

## 2. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ກ່ອນຈະກ້າວເຂົ້າວາລະກອງປະຊຸມ ກອງເລຂາ CCM ໄດ້ຢືນຢັນອົງປະກອບຂອງກອງປະຊຸມແມ່ນພຽງພໍ ແລະ ກໍ່ໄດ້ລາຍງານຕໍ່ກອງປະຊຸມກ່ຽວກັບ ການຕິດຕາມການຈັດຕັ້ງປະຕິບັດໜ້າວຽກ ຕາມທີ່ໄດ້ຕົກລົງກັນໃນ ກອງປະຊຸມ CCM ຄັ້ງວັນທີ 09 ກຸມພາ 2021 ທີ່ຜ່ານມານີ້ກ່ຽວກັບ ຂົງເຂດວຽກງານ ແລະ ກິດຈະກຳທີ່ເປັນບຸລິມະສິດຂອງຂະບວນການວິວັດ CCM ທີ່ກອງທຶນໂລກ ໄດ້ສະເໜີ. ກອງເລຂາຍັງໄດ້ແຈ້ງວ່າ ພາຍຫຼັງທີ່ CCM ໄດ້ຮັບຮອງເອົາ

ຂົງເຂດວຽກງານ ແລະ ກິດຈະກໍາທີ່ເປັນບຸລິມະສິດ ແລ້ວ, CCM Hub ຈະສັງລວມເອົາກິດຈະກໍາເຂົ້າ ໃນແຜນວຽກປະຈໍາປີຂອງ CCM, ແລະ ສົ່ງໜັງສືການຈັດຕັ້ງປະຕິບັດແຜນວຽກເພື່ອໃຫ້ CCM ພິຈາລະນາເຊັນຮັບເອົາ.

**ວາລະກອງປະຊຸມທີ 1: ລາຍງານຜົນການປະເມີນຂອງຂະບວນການວິວັດ CCM, ຂົງເຂດແລະກິດຈະກໍາ ທີ່ເປັນບຸລິມະສິດເພື່ອປັບປຸງວຽກງານຫຼັກຂອງ CCM**

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຈາກກອງເລຂາ CCM ກ່ຽວກັບຜົນການປະເມີນຂອງຂະບວນການວິວັດ CCM, ຂົງເຂດ ແລະ ກິດຈະກໍາທີ່ເປັນບຸລິມະສິດເພື່ອປັບປຸງວຽກງານຫຼັກຂອງ CCM ຊຶ່ງຫົວຂໍ້ດັ່ງກ່າວນີ້ ແມ່ນໄດ້ລາຍງານຕໍ່ກອງປະຊຸມຄະນະກໍາມະການກວດກາ CCM ໃນຄັ້ງວັນທີ່ 23 ເມສາ ທີ່ຜ່ານມາໂດຍໄດ້ມີຄວາມຄິດເຫັນບາງຈຸດເພື່ອນໍາມາສະເໜີຕໍ່ກອງປະຊຸມ CCM ໃນຄັ້ງນີ້ ແລະ ກອງປະຊຸມໄດ້ມີຄໍາເຫັນສໍາຄັນດັ່ງລຸ່ມນີ້:

- ມີຄໍາຖາມ ແລະ ຄໍາເຫັນດຽວກັນກັບໃນກອງປະຊຸມ OC ຄັ້ງຜ່ານມາ ໄດ້ຖືກຍົກຂຶ້ນກ່ຽວກັບງົບປະມານເພີ່ມເຕີມສໍາລັບກິດຈະກໍາຂອງ CBM, ຜູ້ຕາງໜ້າຂອງສູນຕ້ານເອດ ແລະ PMU ໃຫ້ຂໍ້ສັງເກດວ່າ ກິດຈະກໍາຂອງ CBM ໄດ້ລວມເຂົ້າໃນທຶນຊ່ວຍເຫຼືອ HIV ພາກພື້ນແລ້ວ (ຄວາມຍືນຍົງຂອງການບໍລິການ HIV ສໍາລັບປະຊາກອນທີ່ສໍາຄັນໃນອາຊີ SKPA) ເຊິ່ງກິດຈະກໍາຫຼາຍຢ່າງລວມທັງການຝຶກອົບຮົມກ່ຽວກັບ CBM ໃນລະດັບແຂວງ ກໍໄດ້ຖືກຈັດຕັ້ງປະຕິບັດຕາມການ ລາຍງານ ຄວາມຄືບໜ້າ ຈາກ PMU. ທຶນເພີ່ມເຕີມ 12,500 ໂດລາ ສໍາລັບການຝຶກອົບຮົມ CBM ທີ່ໄດ້ຮັບຈາກ CCM Evolution ນີ້ຄວນມີການທົບທວນ ແລະ ຈັດສັນຄືນໃໝ່ເພື່ອກວມເອົາກິດຈະກໍາອື່ນໆເພື່ອຫລີກລ້ຽງການຈັດຕັ້ງປະຕິບັດ ທີ່ຊໍ້າຊ້ອນ. ພ້ອມດຽວກັນນີ້, PMU ໄດ້ສະໜອງຂໍ້ມູນເພີ່ມເຕີມກ່ຽວກັບງົບປະມານ ຂອງ CBM ໃນການຊ່ວຍເຫຼືອ ຂອງ SKPA ທີ່ຍື່ນໂດຍ CHias ເຊິ່ງຫາກໍ່ໄດ້ຈັດສັນຄືນໃໝ່ ແລະ ໄດ້ຍື່ນສະເໜີຕໍ່ AFAO ແລະ TGF ເພື່ອຂໍອະນຸມັດ. ເຖິງຢ່າງໃດກໍ່ຕາມ, ຜູ້ອໍານວຍການ CHias ໃຫ້ຂໍ້ສັງເກດວ່າ ອາດຈະມີຄວາມຕ້ອງການນໍາໃຊ້ທຶນເພີ່ມເຕີມສໍາລັບ ກິດຈະກໍານີ້ ຍ້ອນວ່າທຶນພາຍໃຕ້ການຊ່ວຍເຫຼືອ SKPA ແມ່ນສໍາລັບກິດຈະກໍາ HIV ເທົ່ານັ້ນ. ເງິນຈໍານວນ 12,500 ໂດລາ ສໍາລັບການຝຶກອົບຮົມ CBM ທີ່ໄດ້ຮັບທຶນຈາກ CCM Evolution ອາດຈະແມ່ນ ເພື່ອກວມເອົາກິດຈະກໍາຕ່າງໆຂອງວັນນະໂລກ ແລະ ໄຂ້ຍຸງ. ກອງປະຊຸມໄດ້ແນະນໍາໃຫ້ CHias ແລະ ກອງເລຂາ CCM ຂໍຂໍ້ມູນເພີ້ມເຕີມຈາກ CCM Hub ແລະ ກອງທຶນໂລກ ເພື່ອລາຍງານຄະນະ CCM ຕາມພາຍຫລັງ;
- ຄະນະກໍາມະການ CCM ຍັງໄດ້ຖາມວ່ານອກເໜືອຈາກຄ່າໃຊ້ຈ່າຍ ຈ້າງທີ່ປຶກສາພາຍໃນທ້ອງຖິ່ນແລ້ວ, ຍັງມີງົບປະມານ ເພີ້ມເພື່ອ ດໍາເນີນງານໃດໜຶ່ງ ບໍ່ເຊັ່ນ: ງົບປະມານ ຈັດກອງປະຊຸມປຶກສາຫາລືສໍາລັບຂັ້ນຕອນການກໍານົດຕໍາແໜ່ງ CCM, ການຝຶກອົບຮົມ ແລະ ການຕິດຕາມພາກສະໜາມສໍາລັບການມີສ່ວນຮ່ວມຂອງ CSO. ເຖິງແມ່ນວ່າ CCM ມີງົບປະມານໃນແຜນວຽກປະຈໍາປີປົກກະຕິທີ່ ໄດ້ຮັບອະນຸມັດແລ້ວກໍຕາມ, ແຕ່ຕ້ອງມີງົບປະມານເພີ່ມເຕີມສໍາລັບກິດຈະກໍາບູລິມະສິດທີ່ໄດ້ເພີ່ມເຂົ້າໃນວຽກງານຂະບວນການວິວັດ CCM.
- ເນື່ອງຈາກເຫດຜົນຂ້າງເທິງ, ຄະນະກໍາມະການ CCM ໄດ້ເລື່ອນການຮັບຮອງເອົາ ກິດຈະກໍາ ແລະ ງົບປະມານທີ່ໄດ້ສະເໜີ ມານັ້ນ ແລະ ແນະນາ ໃຫ້ກອງເລຂາ CCM ປະສານງານກັບ CCM Hub ແລະ ຜູ້ຈັດການກອງທຶນກອງໂລກ ເພື່ອຂໍຂໍ້ມູນ ແລະ ຊີ້ແຈງລາຍລະອຽດກ່ຽວກັບທຶນຊ່ວຍເຫຼືອບ້ວງນີ້ຕື່ມ.

**ວາລະກອງປະຊຸມທີ2: ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດທຶນຊ່ວຍເຫຼືອຂອງກອງທຶນໂລກໃຫ້ແກ່ 3 ແຜນງານ (ພະຍາດເອດ ວັນນະໂລກ ແລະ ໄຂ້ຍຸງ)**

**ແຜນງານຄວບຄຸມ ແລະ ລຶບລ້າງໄຂ້ມະລາເຣຍ**

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຈາກຜູ້ຕາງໜ້າ UNOPS ໄດ້ລາຍງານຄວາມຄືບໜ້າ ກ່ຽວກັບຄວາມຕືບໜ້າໃນການຈັດຕັ້ງປະຕິບັດທຶນ ຊ່ວຍເຫຼືອຂອງກອງທຶນໂລກ ໃນຮອບປະຈຸບັນ ແລະ ຮອບຕໍ່ໄປເຂົ້າໃນແຜນງານ ຄວບຄຸມ ແລະ ລຶບລ້າງໄຂ້ມະລາເຣຍ, ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄໍາເຫັນ ແລະ ມີການສົນທະນາ ຊຶ່ງສັງລວມໄດ້ດັ່ງລຸ່ມນີ້:

- ເຖິງແມ່ນວ່າພະຍາດໄຂ້ຍຸງໄດ້ຖືກຈັດເຂົ້າເປັນພະຍາດທີ່ ຕ້ອງໄດ້ລາຍງານປະຈໍາ (Notifiable diseases), ແຕ່ກໍ່ຍັງມີສິ່ງທ້າທາຍບາງຢ່າງ ຕໍ່ກັບການລາຍງານໄຂ້ຍຸງຈາກລະບົບ NCLE's EWARN ເພາະວ່າມີສອງລະບົບຂໍ້ມູນທີ່ແຕກຕ່າງກັນ: ໄຂ້ຍຸງໃຊ້ລະບົບ DHIS2, ແຕ່ NCLE ຍັງບໍ່ທັນໄດ້ເລີ່ມຕົ້ນລາຍງານໃນ DHIS2. ດ້ວຍເຫດຜົນດັ່ງກ່າວ , ພະຍາດໄຂ້ຍຸງແມ່ນບໍ່ໄດ້ລວມເຂົ້າໃນບົດລາຍງານພະຍາດ ແຍຍປະຈໍາຂອງ NCLE. ອົງການບໍລິການເພື່ອປະຊາຊົນ ( PSI) ເປັນຜູ້ທີ່ສະໜັບສະໜູນ EOC ໂດຍການຮ່ວມມືກັບ WHO ແລະ CHAI, ໄດ້ແຈ້ງວ່າແຜນການກໍາລັງດໍາເນີນການເພື່ອຍົກລະດັບລະບົບຂໍ້ມູນຂອງ NCLE ແລະ ລວມເອົາພະຍາດໄຂ້ຍຸງເຂົ້າໃນການລາຍງານຂອງ NCLE;
- ອີງຕາມການສໍາຫລວດ ກ່ຽວກັບການນໍາໃຊ້ມຸ້ງ LLINs, ເຫັນວ່າມຸ້ງສໍາລັບ ຄົວເຮືອນໃນໝູ່ບ້ານ ແມ່ນບໍ່ພຽງພໍ ເພາະວ່າ ມຸ້ງດັ່ງກ່າວຊາວບ້ານໄດ້ເອົາໄປນາໃຊ້ເວລານອນຄ້າງຄືນຢູ່ ປ່າຫລືຟາມ. ຕໍ່ກັບບັນຫານີ້, ຜູ້ຕາງໜ້າຈາກ WHO ໄດ້ກ່າວວ່າແມ່ນຄວາມຄິດທີ່ດີທີ່ນໍາໃຊ້ມຸ້ງຄົວເຮືອນ LLIHNs ສໍາລັບຜູ້ທີ່ ໄປນອນປ່າ ແລະ ກອງທຶນໂລກຄວນສະໜັບສະໜູນມຸ້ງ LLIHN ໃຫ້ຫຼາຍກວ່າເກົ່າ ແລະ ຄວນເບິ່ງຄືນວ່າຄວນແຈກຢາຍໃຫ້ ຄອບຄົວໜຶ່ງຈໍານວນຈັກດາງ;
- ຜູ້ຕາງໜ້າກະຊວງການເງິນ ໄດ້ສະເໜີໃຫ້ກະຊວງສາທາລະນະສຸກ ຕ້ອງຮັບປະກັນວ່າ ຄວາມຕ້ອງການໃນການປະກອບສ່ວນທຶນສົມທົບຂອງລັດຖະບານ ໄດ້ລວມຢູ່ໃນງົບປະມານຂອງລັດຖະບານສໍາລັບປີ 2021;
- ຜູ້ຕາງໜ້າຈາກ CSO ໄດ້ອະທິບາຍວ່າງົບປະມານແມ່ນພຽງພໍສໍາລັບການຈັດຕັ້ງປະຕິບັດກິດຈະກໍາ , ແຕ່ໃນຊ່ວງລະດູຝົນແມ່ນພົບຄວາມຫຍຸ້ງຍາກໃນການແຈກຢາຍມຸ້ງ LLIHN ແລະ ວັດຖຸອຸປະກອນຕ່າງໆໃນການໃຫ້ບໍລິການວຽກງານໄຂ້ຍຸງໃນຊຸມຊົນຢູ່ເຂດຫ່າງໄກສອກຫຼີກ;
- ຜູ້ຕາງໜ້າຂອງ ອົງການ CHAI ໄດ້ສະແດງຄວາມຂອບໃຈຕໍ່ທີມງານ CMPE, UNOPS ແລະ ບັນດາຄູ່ຮ່ວມງານ ທຸກພາກສ່ວນ ທີ່ໄດ້ຈັດຕັ້ງປະຕິບັດວຽກ ງານຢ່າງຫ້າວຫັນ ເຮັດໃຫ້ວຽກງານດໍາເນີນໄປໂດຍ ດີ ແລະ ຄວນຈະສືບຕໍ່ປະຕິບັດຕໍ່ໄປ ເພື່ອບັນລຸເປົ້າໝາຍຂອງໂຄງການ;
- ກອງປະຊຸມໄດ້ແນະນໍາ UNOPS ແລະ CMPE ໃຫ້ເຮັດບົດລາຍງານ ທີ່ນໍາສະເໜີຢູ່ ໃນກອງປະຊຸມ CCM ຄັ້ງນີ້ໂດຍຫຍໍ້ ແລະ ແປເປັນພາສາລາວ ເພື່ອສົ່ງໃຫ້ກະຊວງສາທາລະນະສຸກ.

**ແຜນງານຕ້ານເຮສໄອວີ ແລະ ຄວບຄຸມວັນນະໂລກ**

- ບໍ່ມີຄໍາເຫັນເພີ້ມເຕີມຈາກທີ່ປະຊຸມພາຍຫຼັງ ໄດ້ຮັບຟັງການລາຍງານຄວາມຄືບໜ້ າຈາກຜູ້ຕາງໜ້າ PR PMU ກ່ຽວກັບການຈັດຕັ້ງປະຕິບັດທຶນ ຊ່ວຍເຫຼືອໃນ ຮອບປະຈຸບັນ ແລະ ການຈັດສັນທຶນຊ່ວຍເຫຼືອຮອບໃໝ່ຂອງກອງທຶນໂລກ ເຂົ້າໃນໂຄງການ HIV ແລະTB. PMU ຍັງໄດ້ແຈ້ງໃຫ້ທີ່ປະປະຊຸມຊາບວ່າຈະບໍ່ມີ PMU ໃນອະນາຄົດເນື່ອງຈາກ PMU ໃນປະຈຸບັນຈະໄດ້ປິດລົງ ໃນທ້າຍເດືອນເມສາ ແລະ ໄດ້ໂອນຄວາມຮັບຜິດຊອບໂຄງການທັງໝົດເຂົ້າໃນຫ້ອງການ NPCO/DPC (ໂຄງການ HANSA).

**ວາລະກອງປະຊຸມທີ 3: ແຈ້ງຂ່າວກ່ຽວກັບການສະໜອງທຶນເພີ່ມເຕີມຂອງກອງທຶນໂລກເພື່ອສະໜັບສະໜູນ ໃນການຕອບໂຕ້ ຕໍ່ COVID19 ພາຍໃນປະເທດ**

ຜູ້ຈັດການກອງທຶນໂລກໄດ້ແຈ້ງຕໍ່ກອງເລຂາ CCM ວ່າປະຈຸບັນຍັງບໍ່ມີຂໍ້ມູນລະອຽດກ່ຽວກັບການສະໜອງທຶນຊ່ວຍເຫຼືອເພີ່ມເຕີມສຳລັບການຕອບໂຕ້ຕໍ່ Covid19 ກ່ອນກອງປະຊຸມ CCM ຄັ້ງນີ້. ສະນັ້ນ, ກອງປະຊຸມໄດ້ແນະນຳໃຫ້ຈັດຕັ້ງກອງປະຊຸມທາງໄກລະຫວ່າງຜູ້ຈັດການກອງທຶນ ກັບ ຄະນະກຳມະການບໍລິຫານງານ CCM, PRs ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ ໃນທ້າຍເດືອນເມສາເພື່ອປຶກສາຫາລືຕື່ມກ່ຽວກັບການສະໜອງທຶນເພີ່ມເຕີມຂອງກອງທຶນໂລກດັ່ງກ່າວນີ້.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດໃນເວລາ 16:30 ຂອງວັນທີ 06 ເມສາ 2021.

ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2021

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ສັງລວມເນື້ອໃນກອງປະຊຸມ** |
| ທ່ານ ຣສ. ດຣ. ພູທອນ ເມືອງປາກ | ທ່ານ ບຸດສາລີ ລັດຕະນະ |
| ຮອງລັດຖະມົນຕີກະຊວງສາທາລະນະສຸກ, | ຜູ້ປະສານງານ ແລະ ການເງິນ |
| ປະທານຄະນະກຳມະການປະສານງານກອງທຶນໂລກ | ກອງເລຂາຄະນະກຳມະການປະສານງານກອງທຶນໂລກ |